ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 23 ຫາ 26 ເມສາ 2024



ກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2023 ແລະ ແຜນການປີ 2024 ຂອງ ໂຄງການ ຄສກສ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2023 ແລະ ແຜນການປີ 2024 ຂອງໂຄງການ ສົ່ງເສີມລະບົບຕ່ອງໂສ້ການຜະລິດກະສິກຳເປັນສິນຄ້າທີ່ເປັນມິດຕໍ່ສິ່ງແວດລ້ອມ

ເພື່ອເປັນການທົບທວນບັນດາວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນປີ 2023 ແລະ ທິດທາງໃນປີ 2024 ຂອງໂຄງການສົ່ງເສີມລະບົບຕ່ອງໂສ້ການຜະລິດກະສິກຳເປັນສິນຄ້າ ທີ່ເປັນມິດຕໍ່ສິ່ງແວດລ້ອມ ໄດ້ຈັດກອງປະຊຸມຢູ່ທີ່ຫ້ອງປະຊຸມພະແນກກະສິກຳ ແລະ ປ່າໄມ້ ແຂວງ ສະຫວັນນະເຂດ ໂດຍການເຂົ້າຮ່ວມເປັນປະທານຂອງທ່ານ ສົມພອນ ແກ້ວທາວົງ ຫົວໜ້າກົມສົ່ງເສີມກະສິກຳ ແລະ ສະຫະກອນ ພ້ອມດ້ວຍຫົວໜ້າກົມ, ຮອງຫົວໜ້າກົມ, ຊຶ່ງເປັນຜູ້ຊີ້ນຳອົງປະກອບດ້ານເຕັກນິກ ຈາກ ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ກົມຂົນລະປະທານ, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ກົມປູກຝັງ, ກົມແຜນການ ແລະ ການຮ່ວມມື, ມີບັນດາທ່ານ ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ ຈາກ 5 ແຂວງ ແລະ 1 ນະຄອນຫຼວງ, ທ່ານເຈົ້າເມືອງ/ຮອງ ເຈົ້າເມືອງ ຈາກ 19 ເມືອງເປົ້າໝາຍຂອງໂຄງການ ມີບັນດາຜູ້ປະສານງານ ຈາກ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງເວດລ້ອມ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ , ພ້ອມທັງຜູ້ປະສານງານຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ, ຈາກບັນດາກົມ, ທີມງານທີ່ປຶກສາ ດ້ານການຈັດຕັ້ງປະຕິບັດໂຄງການ PIC , ທີ່ປຶກສາດ້ານກາຄຸ້ມຄອງ ແລະ ສະໜອງທຶນ FME ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງກອງປະຊຸມຄັ້ງນີ້ເພື່ອ : ສະຫຼຸບລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດໂຄງການ ປະຈຳປີ 2023 ສະເໜີທິດທາງແຜນການຈັດຕັ້ງປະຕິບັດໂຄງການ ປີ 2024 ຂອງແຂວງເປົ້າໝາຍ ແລະ ບັນດາກົມທີ່ເປັນອົງປະກອບ



ຂອງໂຄງການໃນກອງປະຊຸມໄດ້ມີການສົນທະນາ ປະປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ເຂົ້າໃນບົດລາຍງານດັ່ງກ່າວ. ໃນວັນຕໍ່ມາກອງປະຊຸມຍັງໄດ້ເປັນກຽດຕ້ອນຮັບການເຂົ້າເປັນປະທານ ແລະ ຊີ້ນຳຂອງທ່ານ ກິແກ້ວ ສິງນາວົງ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ຈາກນັ້ນ ໃນຕອນບ່າຍຂອງວັນດຽວກັນທ່ານປະທານ ພ້ອມດ້ວຍຜູ້ເຂົ້າຮ່ວມກອງປະຊຸມໄດ້ລົງໄປຕິດຕາມຊຸກຍູ້ການຜະລິດຢູ່ທີ່ ບ້ານ ທ່າຂາມລຽນ ເມືອງ ສອງຄອນ ແຂວງ ສະຫວັນນະເຂດ ໄດ້ຮັບຟັງການລາຍງານສະພາບການຜະລິດຈາກນາຍບ້ານ ແລະ ຫົວໜ້າກຸ່ມການຜະລິດພ້ອມທັງໃຫ້ທິດຊີ້ນຳກ່ຽວກັບການຜະລິດຢູ່ພາຍໃນກຸ່ມໃຫ້ສືບຕໍ່ທຳການຜະລິດຕາມທິດທາງເຕັກນິກອັນໃໝ່ເພື່ອສຸມໃສ່ການຜະລິດທີ່ເພີ່ມຂຶ້ນໃນສະພາບການປ່ຽນແປງຂອງດິນຟ້າອາກາດ ແລະ ໃຫ້ໂຄງການສືບຕໍ່ເອົາໃຈໃສ່ລົງໃກ້ສິດກັບປະຊາຊົນຜູ້ທີ່ທຳການຜະລິດເພື່ອຍົກສູງສະພາບການຜະລິດໃຫ້ສູງຂຶ້ນມີລາຍຮັບເພີ່ມຂຶ້ນກວ່າເກົ່າໃນຕໍ່ໜ້າ.


**ຄະນະຮັບຜິດຊອບ:**
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອມດາລາ

**ບັນນາທິການ:**
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

**ຈັດໜ້າອອກແບບໂດຍ:**
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກໍາ;ແລະ ປາໄມ;